ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----===000===-----

ທະນາຄານແຫ່ງ ສປປ ລາວ | ເລກທີ 03 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 MAR 2015

ສຳນັກງານ ຄຄຊ
ຮັບ
ເລກທີ...292...
ວັນທີ 18 MAR 2015
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 02/2015 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງ ມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ໃນເດືອນຜ່ານມາໄດ້ມີບາງເຫດການພົ້ນເດັ່ນຄື: ❶ສຳເລັດການຈັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ວຽກງານສາຍລັດ ປະຈຳເດືອນ 01/2015; ❷ບາງກົມກອງໄດ້ຈັດປາຖະກະຖາເລົ່າມູນເຊື້ອວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 66 ປີ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານທີ່ລັດຖະບານມອບໝາຍໃຫ້

- ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;
- ສຳເລັດການສົ່ງຮ່າງແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016-2025 ໃຫ້ແກ່ຫ້ອງວ່າການລັດຖະບານ ເພື່ອອອກດຳລັດຮັບຮອງ.

### III. ວຽກງານພົ້ນເດັ່ນ

- ສຳເລັດການປະກາດການຈັດຕັ້ງຂັ້ນຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ, ປັບປຸງການຈັດຕັ້ງຂັ້ນກົມຢູ່ກົມບັນຊີ-ການເງິນ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ❶ສຳເລັດການອອກໃບອະນຸຍາດປ່ຽນຊື່ ຂອງທະນາຄານ CIMB ໄທ ສາຂາວຽງຈັນ ມາເປັນ ທະນາຄານ CIMB ໄທ ຈຳກັດ (ມະຫາຊົນ) ສາຂາ ວຽງຈັນ; ❷ມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສະຖາບັນການເງິນທີ່ບໍ່ຮັບເງິນຝາກທະວີໂຊກ, ບໍລິສັດ ລາວອາຊ່ຽນ ເຊົ່າສິນເຊື່ອ ແລະ ສະຫະກອນເງິນຝາກ ເຂດປາກທອນ; ❸ຖອນໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ແລະ ປົດປ້າຍລົງ ພ້ອມທັງສົ່ງສຳນວນຂໍສ້າງຕັ້ງຄືນໃຫ້ ໂຮງຊວດຈຳພີໂນ; ❹ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດກ່ຽວກັບໃຫ້ເອົາໃຈໃສ່, ລະມັດລະວັງ ແລະ ກວດກາບຸກຄົນ ແລະ ນິຕິບຸກຄົນ ທີ່ຖືກລໍ້າບາດ ແລະ ມີສ່ວນພົວພັນກັບການກໍ່ການຮ້າຍ ວ່າໄດ້ມີການເປີດບັນຊີ ຫຼືພົວພັນທຸລະກິດ; ❺ສຳເລັດການລົງກວດກາສຸກເສີນ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ນິວຕັນ ເພື່ອເກັບກຳຂໍ້ມູນລູກຄ້າເງິນຝາກ ທີ່ໄດ້ຮ້ອງຟ້ອງຕໍ່ສະຖາບັນການເງິນດັ່ງກ່າວທີ່ບໍ່ສາມາດຖອນເງິນອອກໄດ້; ❻ສຳເລັດ

ການອອກແຈ້ງເຕືອນທະນາຄານທີ່ບໍ່ສາມາດຈັດຕັ້ງປະຕິບັດການເຜີຍແຜ່ຖານະການເງິນ ປະຈຳໄຕມາດ 4/2014 ຈານວນ 7 ແຫ່ງ;

- ສຳເລັດການລາຍງານຂັ້ນເທິງກ່ຽວກັບຜົນການກວດກາບໍລິສັດທີ່ເຄື່ອນໄຫວຊື້-ຂາຍຮຸ້ນ ໃນຮູບແບບ E-Trade ຢູ່ ສປປ ລາວ ທີ່ບໍ່ທັນສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ 4 ແຫ່ງ ຄື: ບໍລິສັດ ລາວແມັກສ໌ຄີ ສະເຕໂບ ຈຳກັດຜູ້ດຽວ, ບໍລິສັດ ລາວແມັກສຄີ ສະເຕໂບ 1 ຈຳກັດຜູ້ດຽວ, ບໍລິສັດ ຊີດີທີອັບລາວ ຂາເຂົ້າ-ຂາອອກ ຈຳກັດຜູ້ດຽວ ແລະ ບໍລິສັດ ລາວຄຳ ທີ່ປຶກສາທາງດ້ານການລົງທຶນ ຈຳກັດຜູ້ດຽວ ສາຂານະຄອນຫຼວງວຽງຈັນ;
- ສຳເລັດການຈັດກອງປະຊຸມຕ່າງໆ ດັ່ງນີ້: ❶ກອງປະຊຸມປະຊຸມຄົ້ງປະຖົມມະລຶກ ຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❷ກອງປະຊຸມຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ❸ກອງປະຊຸມໂຄງການທັນເປັນທັນສະໄໝຂອງ ທຫລ; ❹ກອງປະຊຸມຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທະນາຄານນະໂຍບາຍ; ❺ກອງປະຊຸມປຶກສາຫາລືການຮ່າງນິຕິກຳ ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❻ກອງປະຊຸມຄະນະກະກຽມເປັນເຈົ້າພາບກອງປະຊຸມອາຊ່ຽນ ໃນປີ 2016; ❼ກອງປະຊຸມລະດົມທຶນທະນາຄານທຸລະກິດ ເພື່ອກະກຽມສະເຫຼີມສະຫຼອງສອງວັນປະຫວັດສາດ; ❽ກອງປະຊຸມສຳມະນາຖອດຖອນບົດຮຽນວຽກງານຄຸ້ມຄອງທະນາຄານທຸລະກິດກັບທະນາຄານແຫ່ງລັດ ສສ ຫວຽດນາມ ແລະ ທະນາຄານກາງເຢຍລະມັນ; ❾ກອງປະຊຸມປຶກສາຫາລືການກະກຽມເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ;
- ສຳເລັດການເຊັນສັນຍາເງິນກູ້ລ່ວງໜ້າໃຫ້ກະຊວງການເງິນ ເພື່ອນຳໃຊ້ເຂົ້າໃນການອ່ອຍໜີ້ 3 ແຈ ໂຄງການລົງທຶນຂອງລັດ ງວດທີ 1 ແລະ ໄດ້ໂອນຊຳລະແລ້ວ 127 ຕື້ກີບ;
- ສຳເລັດການອອກແຈ້ງການເຖິງກົມກ່ຽວຂ້ອງ ເພື່ອກະກຽມເນື້ອໃນເອກະສານທີ່ຈະຜ່ານກອງປະຊຸມສະພາບໍລິຫານ ທຫລ ສະໄໝສາມັນ ຄັ້ງທີ I ປະຈຳປີ 2015 ແລະ ແຈ້ງການເຖິງບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ເພື່ອກະກຽມສະຫຼຸບການເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານປະຈຳສົກປີງົບປະມານ 2013-2014 ແລະ ແຜນ 6 ເດືອນຕົ້ນສົກປີ 2014-2015;
- ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ, ເອກະຊົນ ແລະ ສາຂາຕ່າງປະເທດ ໃນຂອບເຂດທົ່ວປະເທດ ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ການຊອກຮູ້ລູກຄ້າ ຫຼື ລະມັດລະວັງ ໃນການພົວພັນທຸລະກິດກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງກ່ຽວຂ້ອງກັບກຸ່ມກໍ່ການຮ້າຍ Al-Gaida ທີ່ຖືກຂຶ້ນບັນຊີດຳຈາກອົງການສະຫະປະຊາຊາດ.

## IV. ວຽກງານວິຊາສະເພາະ

### 1. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

#### 1.1. ສະພາບເສດຖະກິດເງິນຕາສາກົນ

ສະພາບເສດຖະກິດຂອງປະເທດໃນຂົງເຂດເອີຣົບ ຍັງສືບຕໍ່ຂະຫຍາຍຕົວໃນຈັງວະທີ່ຊ້າລົງ ແລະ ຍັງປະເຊີນກັບບັນຫາສະພາບເງິນຝືດໃນປັດຈຸບັນ ຊຶ່ງມີຜົນກະທົບຕໍ່ແຜນການຟື້ນຟູເສດຖະກິດໃນຕໍ່ໜ້າ. ໃນຂະນະທີ່, ສູນສະຖິຕິເອີຣົບ ໄດ້ປະກາດຕົວເລກອັດຕາເງິນເຟີ້ໃນຂົງເຂດເອີຣົບ ປະຈຳເດືອນ 1/2015 ຢູ່ລະດັບ -0,6%. ພ້ອມດຽວກັນນັ້ນ, ທະນາຄານກາງເອີຣົບ (ECB) ກໍ່ໄດ້ອອກຖະແຫຼງການຢຸດໃຫ້ການຊ່ວຍເຫຼືອທາງການເງິນໃຫ້ແກ່ສະຖາບັນການເງິນຂອງປະເທດເກຼັກ ລວມເຖິງການລະງັບການປ່ອຍກູ້ທຸກຮູບແບບໃຫ້ແກ່ລັດຖະບານຂອງເກຼັກ. ຢ່າງໃດກໍ່ຕາມ, ລັດຖະບານເກຼັກເອງຍັງສາມາດສືບຕໍ່ນຳໃຊ້ກອງທຶນສຸກເສີນຂອງທະນາຄານກາງເກຼັກໄດ້. ພ້ອມດຽວກັນນັ້ນ, ຜູ້ນຳຂອງປະເທດເກຼັກ ກໍ່ກຳລັງເຈລະຈາກັບເຈົ້າໜ້າທີ່ລະດັບສູງຂອງເອີຣົບ ເພື່ອສະເໜີຂໍການຜ່ອນຜັນມາດຕະການຮັດກຸມ ແລະ ການສະເໜີຂໍຫລຸດຜ່ອນໜີ້ສິນຂອງປະເທດ. ໃນຂະນະທີ່, ປະເທດ ສ. ອາເມລິກາ ໄດ້ປະກາດຕົວເລກອັດຕາການຂະຫຍາຍຕົວທາງດ້ານເສດຖະກິດປະຈຳໄຕມາດ 4/2014 ຂະຫຍາຍຕົວໃນລະດັບພຽງ 2,6% ຊຶ່ງເປັນຕົວເລກທີ່ຕ່ຳສຸດທຽບໃສ່ທັງ 3 ໄຕມາດຜ່ານມາ.

### 1.2. ການຮັກສາສະຖຽນລະພາບເງິນຕາພາຍໃນ

ໂດຍອີງໃສ່ສະພາບເສດຖະກິດເງິນຕາສາກົນ, ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ດັ່ງລາຍລະອຽດ ລຸ່ມນີ້:

- ຖານເງິນຕາປະຈຳເດືອນ 2/2015 ເພີ່ມຂຶ້ນ 290,34 ຕື້ກີບ ຫຼື 1,09% ທຽບໃສ່ເດືອນ 1/2015, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.274,20 ຕື້ ກີບ ຫຼື 52,59%. ສາເຫດຍ້ອນຮັບໂອນເງິນຈາກຕ່າງປະເທດ ສຸດທິ 45,77 ລ້ານໂດລາ. ໃນນັ້ນ, ຮັບທຶນຈົດທະບຽນຂອງທະນາຄານທຸລະກິດ 15 ລ້ານໂດລາ, ທຫລ ປ່ອຍສິນເຊື່ອໂຄງການບູລິມະສິດຂອງລັດຖະບານ 31 ລ້ານໂດລາ, ທຫລ ລ່ວງໜ້າໃຫ້ລັດຖະບານ 840 ຕື້ກີບ. ໃນຂະນະດຽວກັນ, ທຫລ ຖອນສິດ ສຸດທິ 77,27 ລ້ານໂດລາ ແລະ ລັດຖະບານຊຳລະໜີ້ຕ່າງປະເທດ 31 ລ້ານໂດລາ. ປະລິມານເງິນ M2 ເພີ່ມຂຶ້ນ 292,30 ຕື້ ກີບ ຫຼື 0,53% ທຽບໃສ່ເດືອນ 1/2015, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11.117,97 ຕື້ກີບ ຫຼື 25,33%;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 2/2015 ທຽບໃສ່ເດືອນ 1/2015 ເຫັນວ່າ ສືບຕໍ່ມີສະຖຽນລະພາບ ເຫັນໄດ້ຈາກເງິນກີບທຽບເງິນໂດລາ ອ່ອນຄ່າ 0,22% ສຳລັບອັດຕາ ທທກ ແລະ ອ່ອນຄ່າ 0,08% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບເງິນບາດ ອ່ອນຄ່າ 0,90% ສຳລັບອັດຕາ ທທກ ອ່ອນຄ່າ 0,004% ສຳລັບອັດຕາຕະຫຼາດ. ສ່ວນຕ່າງລະຫວ່າງ ອັດຕາ ທທກ ກັບອັດຕາຕະຫຼາດ ຫຍັບເຂົ້າຫາກັນທັງສອງສະກຸນເງິນຄື: ຈາກ 0,37% ມາເປັນ 0,23% ສຳລັບສະກຸນເງິນກີບທຽບໂດລາ ແລະ ຈາກ 0,92% ມາເປັນ 0,01% ສຳລັບສະກຸນເງິນກີບທຽບບາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ທທກ ຂາຍເງິນຕາຕ່າງປະເທດສຸດທິ 28,53 ລ້ານໂດລາທຽບເທົ່າ ຫຼຸດລົງ 8,87% ເມື່ອທຽບໃສ່ເດືອນຜ່ານມາ ໃນນີ້: ຊື້ໂດລາສຸດທິ 11,52 ລ້ານໂດລາ ແຕ່ຂາຍບາດສຸດທິ 1.295,43 ລ້ານບາດ. ສະນັ້ນ, ທຫລ ຈຶ່ງໄດ້ດັດສົມຕະຫຼາດເງິນຕາຕ່າງປະເທດ ດ້ວຍການຂາຍສຸດທິ 43,49 ລ້ານໂດລາທຽບເທົ່າ ໃນນີ້: ຂາຍເງິນໂດລາສຸດທິ 57,40 ລ້ານໂດລາ ແຕ່ຊື້ເງິນບາດສຸດທິ 449,70 ລ້ານບາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

- ອັດຕາເງິນເຟີ້ປະຈຳເດືອນ 02/2015 ຄາດວ່າຈະຢູ່ໃນລະດັບ 2,00% ຫຼຸດລົງ 0,20% ຈາກ 2,20% ໃນເດືອນ 01/2015 ຜ່ານມາ;

## 2. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດເດືອນ 2/2015 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 46.444 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,23%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 2,26% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 50,73% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 1,78% ຊຶ່ງກວມເອົາ 49,27% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດເດືອນ 02/2015 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 41.663,59 ຕື້ກີບ ເພີ່ມຂຶ້ນ 0,74% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 50,07% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາ ກວມເອົາ 49,93% ຂອງສິນເຊື່ອທັງໝົດ.

ໃນເດືອນ 02/2015 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 13,26 ຕື້ກີບ ຫຼຸດລົງ 77,39% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈຳນວນ 12,66 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈຳນວນ 600 ລ້ານກີບ, ບໍ່ມີການສິນເຊື່ອ 3 ສ້າງ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງ ການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 02/2015 ມີຈຳນວນ 2.329,64 ຕື້ກີບ ຫຼຸດລົງ 1% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້ ໜີ້ປົກກະຕິ ກວມເອົາ 78,19% ແລະ ໜີ້ກາຍສັນຍາ ກວມເອົາ 21,80% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 01/2015 ມີ ຈຳນວນ 2.930,56 ຕື້ກີບ ເພີ່ມຂຶ້ນ 16,45% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 4,56% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນເມື່ອທຽບໃສ່ເດືອນຜ່ານມາ ຍ້ອນທະນາຄານສົ່ງເສີມກະສິກຳ, ທະນາຄານພັດທະນາລາວ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີໜີ້ NPLs ເພີ່ມຂຶ້ນຫຼາຍກວ່າໝູ່.

## 3. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 3.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.558 ສະບັບ ເພີ່ມຂຶ້ນ 11,04% ເປັນເງິນຈຳນວນ 2.489,96 ຕື້ກີບ ເພີ່ມຂຶ້ນ 17,26% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 164 ຄັ້ງ ມີມູນຄ່າການໂອນ 535,70 ຕື້ກີບ ຫຼຸດລົງ 15,53% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 29/01-27/02/2015 ມີການເຄື່ອນໄຫວຈຳນວນ 5.109 ຄັ້ງ ມີມູນຄ່າ 1.325,35 ຕື້ກີບ ຫຼຸດລົງ 22,03% ເມື່ອທຽບໃສ່ເດືອນຜ່ານມາ. ທະນາຄານທຸລະກິດທີ່ເຮັດທຸລະກຳສູງສຸດ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 1.688 ຄັ້ງ.

### 3.2 ການຊື້-ຂາຍພັນທະບັດ

ໃນເດືອນ 02/2015 ພັນທະບັດກະຊວງການເງິນ ມີການຈຳໜ່າຍພັນທະບັດບ້ວງລະດົມທຶນໃຫ້ ທະນາຄານລາວ-ຫວຽດ ຈຳນວນ 20 ລ້ານໂດລາ ແລະ ໄດ້ໄຖ່ຖອນພັນທະບັດບ້ວງລ້າງໜີ້ ຈຳນວນ 15 ຕື້ກີບ. ປັດຈຸບັນມີພັນທະບັດກະຊວງການເງິນ ມີທັງໝົດ 5 ບ້ວງ ຊຶ່ງມີຍອດເຫຼືອ 6.275,40 ຕື້ກີບ ແລະ 90 ລ້ານໂດລາ.

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 02/2015 ມີການໄຖ່ຖອນພັນທະບັດໃຫ້ທະນາຄານທຸລະກິດຈຳນວນ 0,20 ລ້ານໂດລາ. ປັດຈຸບັນພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ມີຈຳນວນ 155,50 ລ້ານໂດລາ. ພາຍໃນເດືອນນີ້ມີການຈ່າຍດອກເບ້ຍພັນທະບັດທັງໝົດ 953.781 ໂດລາ.

## 4. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.397,35 ຈຸດ ຫຼຸດລົງ 1,15% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 4,79 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 32,82 ຕື້ກີບ ຫຼຸດລົງ 44,06% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 62,79% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.917 ກີບ/ຮຸ້ນ ຫຼຸດລົງ 74 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 317.206 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,19 ຕື້ກີບ ເພີ່ມຂຶ້ນ 112,97% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 61,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,48%.

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.004 ກີບ/ຮຸ້ນ ຫຼຸດລົງ 46 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4,23 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 29,68 ຕື້ກີບ ຫຼຸດລົງ 6,31% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 69,82% ຂອງມູນຄ່າການຊື້-ຂາຍຂອງ ຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,27%.

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.638 ກີບ/ຮຸ້ນ ເພີ່ມຂຶ້ນ 1.499 ກີບ/ຮຸ້ນ ເມື່ອທຽບໃສ່ ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 252 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 2,42 ລ້ານກີບ ຫຼຸດລົງ 88,37% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 33,33% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນ ຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%.

---

[1] ເດືອນ 2/2014 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງບໍ່ຄົບຖ້ວນ.

ຮຸ້ນຂອງບໍລິສັດປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.011 ກີບ/ຮຸ້ນ ຫຼຸດລົງ 39 ກີບ/ຮຸ້ນ ເມື່ອທຽບໃສ່ປີທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 235.187 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 943,32 ລ້ານກີບ ຫຼຸດລົງ 96,36% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 26,84% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%.

## V. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

ການຄົ້ນຄວ້າເຊື່ອມຊຶມ ບັນດາເອກະສານ, ຂໍ້ກຳນົດ, ກົດລະບຽບ ແລະ ບັນດາກົດໝາຍຕ່າງໆ ຂອງພະນັກງານຈຳນວນໜຶ່ງຍັງບໍ່ທັນເລິກເຊິ່ງ ຈຶ່ງເຮັດໃຫ້ພະນັກງານຂາດການຕື່ນຕົວໃນການປະຕິບັດວຽກງານ, ມີແນວຄິດເອື່ອຍອີງ, ເຮັດວຽກຕາມຄຳສັ່ງເທົ່ານັ້ນ;

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຈຶ່ງໄດ້ມີການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ ໂດຍຖືເອົາການສຳຫຼວດກວດກາປະຈຳເດືອນເປັນບ່ອນຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ ເອົາໃຈໃສ່ປຸກລະດົມພະນັກງານໃຫ້ມີຄວາມກະຕືລືລົ້ນ ມີຄວາມຮັບຜິດຊອບສູງ. ຊຸກຍູ້ພະນັກງານໃຫ້ມີຄວາມເອົາໃຈໃສ່ຮຽນຮູ້ປະສົບການຕ່າງໆ ດ້ານວຽກງານວິຊາສະເພາະໃຫ້ມີຄວາມໜັກແໜ້ນກວ້າງຂວາງກວ່າເກົ່າ.

# ພາກທີII
# ທິດທາງແຜນການໃນຕໍ່ໜ້າ

## I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ແຜນປະຕິບັດວຽກງານຈຸດສຸມໃນຕໍ່ໜ້າ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ.
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນ

ໄຂໃຫ້ນໍາໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນໍາໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;

- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກໍາທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆ ໄດ້ແກ່: ❶ປັບປຸງຮ່າງກົດໝາຍ ເປັນຕົ້ນກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບສະພາແຫ່ງຊາດ ແລະ ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ; ❷ປັບປຸງຮ່າງດໍາລັດ ເປັນຕົ້ນດໍາລັດວ່າດ້ວຍໂຮງຊວດຈໍາ, ຮ່າງດໍາລັດວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ ແລະ ສືບຕໍ່ປັບປຸງເນື້ອໃນຮ່າງດໍາລັດວ່າດ້ວຍທຸລະກິດໃຫ້ເຊົ່າສິນເຊື່ອ; ❸ຕິດຕາມຮ່າງຂໍ້ຕົກລົງ ເປັນຕົ້ນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ, ເອກະສານສະເໜີຂໍສ້າງຕັ້ງ ທຫລ ສາຂາຊຽງຂວາງ ທີ່ໄດ້ສົ່ງໃຫ້ກະຊວງພາຍໃນ, ສືບຕໍ່ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ, ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄໍາແນະນໍາເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສໍາລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; ❹ຕິດຕາມເອກະສານທີ່ສະເໜີເຖິງກະຊວງພາຍໃນ ເຊັ່ນ: ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ, ❺ສືບຕໍ່ຄົ້ນຄວ້າປັບປຸງພາລະບົດບາດຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ;

- ສືບຕໍ່ຈັດຕັ້ງປະຕິບັດ ໂຄງການເຊື່ອມຕໍ່ ATM ລະຫວ່າງ ທຫລ ແລະ CDB; ຂະຫຍາຍໂຄງການ ATM Pools 3 ທະນາຄານ ຄື: ທະນາຄານ ລາວ-ຈີນ, ທະນາຄານ ມາຣູຮານເຈແປນ-ລາວ ແລະ ທະນາຄານ ເອສທີ;
- ກະກຽມອອກແຈ້ງການເຖິງບັນດາທະນາຄານທຸລະກິດທົ່ວລະບົບ ກ່ຽວກັບການຫ້າມເປີດບັນຊີນິລະນາມ;
- ຕິດຕາມການສະເໜີໃຫ້ການຊ່ວຍເຫຼືອທາງດ້ານວິຊາການຂອງສະຖານທູດອັງກິດ ປະຈໍາ ສປປ ລາວ ໃຫ້ກັບໜ່ວຍງານຂໍ້ມູນຕ້ານການຟອກເງິນ ໃນຫົວຂໍ້ "Financial Analysis";
- ສືບຕໍ່ປະສານ ແລະ ຕິດຕາມກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການຂໍຄວາມຊ່ວຍເຫຼືອດ້ານວິຊາການ ເພື່ອຫັນການຄຸ້ມຄອງທະນາຄານທຸລະກິດ ຕາມຫຼັກການ Basel II;
- ກະກຽມເຊັນບົດບັນທຶກຊ່ວຍຈໍາ ລະຫວ່າງໜ່ວຍງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ກັບ ກົມພາສີ ກະຊວງການເງິນ, ກົມຕໍາຫຼວດເສດຖະກິດ ກະຊວງປ້ອງກັນຄວາມສະຫງົບ ແລະ ໜ່ວຍງານຂໍ້ມູນຕ້ານການຟອກເງິນ ປະເທດກໍາປູເຈຍ;
- ສືບຕໍ່ລາຍງານທຸລະກໍາທີ່ມີລັກຊະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ດຣ. ສົມພາວ ໄພສິດ**

## ຕາຕະລາງຄັດຕິດບົດລາຍງານ

### ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 01/2015 | | | ເດືອນນີ້ 02/2015 | | | %(+)ເງິນກີບແຂງ/(-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ໂດລາ | 8,108.37 | 8,092.46 | 8,094.16 | 8,125.75 | 8,110.39 | -0.20% | -0.21% | 8,108.37 | 8,092.46 |
| ບາດ | 248.54 | 248.06 | 249.75 | 250.83 | 250.32 | -0.95% | -0.91% | 248.54 | 248.06 |
| +ນອກລະບົບ | | | | | | | | | |
| ໂດລາ | 8,146.68 | 8,122.41 | 8,107.49 | 8,150.89 | 8,129.19 | -0.12% | -0.05% | 8,146.68 | 8,122.41 |
| ບາດ | 251.28 | 250.35 | 249.47 | 251.25 | 250.36 | -0.03% | 0.01% | 251.28 | 250.35 |
| ຜິດດ່ຽງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0.47% | 0.37% | 0.16% | 0.31% | 0.23% | 0.47% | | | |
| -ບາດ | 1.10% | 0.92% | -0.11% | 0.17% | 0.01% | 1.10% | | | |

### ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ

| | ເດືອນ 01/2015 | | ເດືອນ 02/2015 | | | (%) +ເພີ່ມຂຶ້ນ/-ຫລຸດລົງ | |
|---|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ທຽບເທົ່າໂດລາ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | | |
| - ທ/ຄ ທຸລະກິດລັດ | 94.93 | 916.04 | 81.49 | 1,459.08 | 126.61 | -14.15% | 59.28% |
| - ທ/ຄ ທຸລະກິດອື່ນໆ | 162.06 | 607.93 | 119.81 | 1,009.21 | 151.02 | -26.07% | 66.01% |
| ລວມຊື້: | **256.99** | **1,523.97** | 201.30 | 2,468.28 | 277.63 | -21.67% | 61.96% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | | |
| - ທ/ຄທຸລະກິດລັດ | 91.39 | 910.71 | 100.59 | 969.02 | 130.56 | 10.07% | 6.40% |
| - ທ/ຄທຸລະກິດອື່ນໆ | 133.45 | 1,420.23 | 89.19 | 2,794.69 | 175.60 | -33.17% | 96.78% |
| ລວມຂາຍ: | 224.85 | 2,330.94 | 189.78 | 3,763.71 | 306.16 | -15.60% | 61.47% |
| ທທກ ຊື້-ຂາຍສຸດທິ | 32.14 | -806.97 | 11.52 | -1,295.43 | -28.53 | -64.15% | 60.53% |
| % ຜິດດ່ຽງຊື້-ຂາຍ | 12.51 | -52.95 | 5.72 | -52.48 | -10.28 | -678.35% | 46.86% |
| ມູນຄ່າການຊື້-ຂາຍ | 481.84 | 3,854.91 | 391.08 | 6,231.99 | 583.79 | -18.84% | 61.66% |
| 3. ຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | | | | | | | |
| - ທຫລ ຊື້ຈາກ ທທກ | 28.60 | 242.00 | 0.00 | 728.70 | 22.53 | -100.00% | 201.12% |
| - ທຫລ ຂາຍໃຫ້ ທທກ | 27.80 | 119.99 | 57.40 | 279.00 | 66.03 | 106.50% | 132.52% |
| ທຫລ ຊື້-ຂາຍສຸດທິ | 0.80 | 122.01 | -57.40 | 449.70 | -43.49 | -724.11% | 268.58% |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 44.14 | 307.18 | 44.38 | 822.86 | 69.83 | 0.54% | 167.87% |
| 5. ຊື້-ຂາຍ ລະຫວ່າງ ທຫລ ກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | | |
| - ທຫລ ຊື້ຈາກພາກສ່ວນອື່ນ | 10.19 | 645.58 | 22.20 | 1,697.76 | 74.70 | 117.83% | 162.98% |
| - ທຫລ ຂາຍໃຫ້ພາກສ່ວນອື່ນ | 20.79 | 14.98 | 51.73 | 1.66 | 51.78 | 148.85% | -88.93% |
| ທຫລ ຊື້-ຂາຍສຸດທິ | -10.60 | 630.60 | -29.53 | 1,696.10 | 22.92 | 178.69% | 168.96% |